**ຄະນະບໍລິຫານງານສູນກາງພັກ**
**ຄະນະພົວພັນຕ່າງປະເທດສູນກາງພັກ**

**ພັກກອມມູນິດຫວຽດນາມ**

*ຮ່າໂນ້ຍ, ວັນທີ 15 ກໍລະກົດ 2022*

# ໂທລະເລກອວຍພອນ

**ເຖິງ: ສະຫາຍ ທອງສະຫວັນ ພົມວິຫານ**
**ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນ**
**ຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ**
ທີ່ ນະຄອນຫຼວງວຽງຈັນ

ສະຫາຍ ທອງສະຫວັນ ພົມວິຫານ ທີ່ຮັກແພງ!

ເນື່ອງໃນໂອກາດ ວັນສ້າງຕັ້ງສາຍພົວພັນທາງການທູດ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາ ມິດຕະພາບ ແລະ ການຮ່ວມມື ຫວຽດນາມ-ລາວ ຄົບຮອບ 45 ປີ, ຕາງໜ້າຄະນະນຳ, ພະນັກງານ ຄະນະ ພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ທຸກຖ້ວນໜ້າ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍ ຝາກ ຄວາມຮັກແພງຖາມສະຫາຍອ້າຍນ້ອງ ທີ່ສະໜິດສະໜົມ ແລະ ພອນໄຊອັນປະເສີດ ມາຍັງສະຫາຍ ພ້ອມ ດ້ວຍບັນດາສະຫາຍການນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ທຸກຖ້ວນໜ້າ.

ຫວຽດນາມ ແລະ ລາວ ເປັນສອງປະເທດບ້ານໃກ້ເຮືອນຄຽງທີ່ສະໜິດສະໜົມ, ມີການພົວພັນທີ່ເປັນ ມູນເຊື້ອ ທີ່ສະໜິດແໜ້ນ ແລະ ບໍລິສຸດຜຸດຜ່ອງ ມາແຕ່ດົນນານ. ພິເສດ ນັບແຕ່ ພັກກອມມູນິດອິນດູຈີນ ໄດ້ ຮັບການສ້າງຕັ້ງຂຶ້ນ ເຊິ່ງປະຈຸບັນແມ່ນ ພັກກອມມູນິດຫວຽດນາມ ແລະ ພັກປະຊາຊົນ ປະຕິວັດລາວ ໄດ້ເປີດ ໜ້າປະຫວັດສາດ ສະຫວ່າງສະໄຫວຂອງ ສາຍພົວພັນພິເສດ ຫວຽດນາມ-ລາວ, ສິ່ງດັ່ງກ່າວໄດ້ກາຍເປັນ ພື້ນຖານອັນໜັກໜັ້ນຂອງ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່ ຫວຽດນາມ-ລາວ, ເປັນຊັບສົມບັດລວມ ອັນລ້ຳຄ່າຂອງສອງຊາດ, ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວ, ເປັນປັດໃຈສຳຄັນສຸດທີ່ເພື່ອ ຮັບປະກັນໃຫ້ແກ່ຄວາມສຳເລັດຂອງພາລະກິດປະຕິວັດຂອງແຕ່ລະປະເທດ.

ພວກຂ້າພະເຈົ້າ ສຸດທີ່ປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ເຫັນວ່າ ຕະຫຼອດໄລຍະ 60 ປີທີ່ຜ່ານມາ, ສາຍພົວ ພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ຫວຽດນາມ-ລາວ ສາມາດ ຍາດໄດ້ບັນດາຜົນສຳເລັດອັນຮອບດ້ານ, ໃຫຍ່ຫຼວງ, ສຳຄັນ ໃນພະລະກິດຕໍ່ສູ້ຍາດເອົາເອກະລາດແຫ່ງຊາດ, ທ້ອນໂຮມປະເທດຊາດ ໃນເມື່ອກ່ອນ ກໍ່ຄືໃນພາລະກິດປ່ຽນແປງໃໝ່, ປົກປັກຮັກສາ ແລະ ສ້າງສາພັດທະນາ ປະເທດຊາດ ໃນປະຈຸບັນ. ບັນດາໝາກຜົນດັ່ງກ່າວ, ແມ່ນເລີ່ມມາຈາກ ສາຍພົວພັນສາມັກຄີພິເສດ, ສະໜິດ ຕິດແທດ ແລະ ໄດ້ກາຍເປັນສັນຍາລັກອັນສັກສິດຂອງ ສອງພັກ, ສອງປະເທດ, ເປັນພື້ນຖານ ແລະ ກຳລັງທີ່ ແຂງແກ່ນ ໃຫ້ແກ່ພາລະກິດປົກປັກຮັກສາ, ສ້າງສາ ແລະ ພັດທະນາປະເທດຊາດ ຂອງແຕ່ລະປະເທດ ໃນປະຈຸ ບັນນີ້ ແລະ ໃນອະນາຄົດ ເພື່ອຜົນປະໂຫຍດຂອງປະຊາຊົນແຕ່ລະປະເທດ, ເພື່ອສັນຕິພາບ, ຄວາມໝັ້ນຄົງ, ການຮ່ວມມື ແລະ ພັດທະນາ ຢູ່ໃນພາກພື້ນ ແລະ ໃນໂລກ.

ເນື່ອງໃນໂອກາດອັນສະຫງ່າລາສີນີ້, ພວກຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ ບັນດາຜົນສຳເລັດອັນໃຫຍ່ຫຼວງ, ຮອບດ້ານ, ມີຄວາມໝາຍປະຫວັດສາດທີ່ ພັກ, ລັດ ແລະ ປະຊາຊົນລາວ

ອ້າຍນ້ອງ ຍາດມາໄດ້ໃນພາລະກິດປ່ຽນແປງໃໝ່, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ພວກຂ້າພະເຈົ້າ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ປະຊາຊົນລາວອ້າຍນ້ອງ ຈະສືບຕໍ່ຍາດໄດ້ຫຼາຍຜົນສຳເລັດອັນໃໝ່, ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດປ່ຽນແປງໃໝ່, ຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄດ້ຢ່າງມີໄຊ, ສ້າງສາປະເທດລາວ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ ຕາມຈຸດໝາຍສັງຄົມນິຍົມ, ຄວາມເຊື່ອໝັ້ນ ແລະ ບົດບາດອິດທິພົນຂອງ ສປປ ລາວ ນັບມື້ໄດ້ຮັບການຍົກສູງຂຶ້ນຢູ່ໃນພາກພື້ນ ແລະ ເວທີສາກົນ.

ພວກຂ້າພະເຈົ້າ ຕີລາຄາສູງຕໍ່ການປະກອບສ່ວນອັນສຳຄັນຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໃນພາລະກິດປ່ຽນແປງໃໝ່, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ປະກອບສ່ວນເຂົ້າໃນການເພີ່ມທະວີ ແລະ ເສີມຂະຫຍາຍ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ, ສະໜິດຕິດແທດ, ເຊື່ອໝັ້ນ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ ເວົ້າລວມ ແລະ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການຮ່ວມມືຮອບດ້ານ ລະຫວ່າງ ສອງຄະນະພົວພັນຕ່າງປະເທດຂອງສອງພັກ ເວົ້າສະເພາະ.

ອວຍພອນໃຫ້ ສະຫາຍ ພ້ອມດ້ວຍບັນດາສະຫາຍການນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ທຸກຖ້ວນໜ້າ ເຮັດສຳເລັດໜ້າທີ່ ທີ່ໄດ້ຮັບມອບໝາຍ ຢ່າງຈົບງາມ, ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງ ພັກປະຊາຊົນ ປະຕິວັດລາວ ໄດ້ຢ່າງມີໄຊ.

ອວຍພອນໃຫ້ການພົວພັນຮ່ວມມື ລະຫວ່າງ ສອງຄະນະພົວພັນຕ່າງປະເທດສູນກາງພັກ ພວກເຮົາ ນັບມືສະໜິດແໜ້ນ, ໝັ້ນຄົງ ແລະ ປະສິດທິຜົນສູງ.

ອວຍພອນໃຫ້ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ຫວຽດນາມ-ລາວ ຈົ່ງຂຽວສົດງົດງາມ ແລະ ໝັ້ນຄົງຂະໜົງແກ່ນຊົ່ວກາລະນານ.

(ລາຍເຊັນ)

**ເລ ຮວາຍ ຈຸງ**

ກຳມະການສູນກາງພັກ

ຫົວໜ້າຄະນະພົວພັນຕ່າງະເທດສູນກາງພັກ

ກອມມູນິດຫວຽດນາມ